ປະກາດແຈ້ງເຕືອນໄຂຜົນປະໂຫຍດອີງຕາມກົດໝາຍຫົວຂໍ້

# 175Mຄ່າທົດແທນຂອງການຂໍລາພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ

### ເລີ່ມວັນທີ 1 ເດືອນຕຸລາ ປີ 2019:

- ນາຍຈ້າງຈະຕັດເງິນບັນນາການອອກຈາກລາຍໄດ້ຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ ຫຼືຈາກລາຍໄດ້ອື່ນໆເພື່ອມາເປັນທຶນໃຫ້ໂຄງການ PFML

### ເລີ່ມວັນທີ 1 ເດືອນມັງກອນ ປີ 2021:

- ຜູ້ໄດ້ຮັບຜົນປະໂຫຍດອາດມີສິດໄດ້ຮັບເງິນຈາກການຂໍລາພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ ສູງຮອດ 20 ອາທິດຕໍ່ປີ ຖ້າເຂົາເຈົ້າມີບັນຫາສຸຂະພາບທີ່ຮ້າຍແຮງ ອັນເປັນສາເຫດໃຫ້ເຮັດວຽກບໍ່ໄດ້
- ຜູ້ໄດ້ຮັບຜົນປະໂຫຍດອາດມີສິດໄດ້ຮັບເງິນຈາກການຂໍລາພັກງານດ້ວຍສາເຫດຄອບຄົວແລະເຈັບຄວາມປ່ວຍ ສູງຮອດ 12 ອາທິດຕໍ່ປີ ຖ້າມີສາເຫດກ່ຽວກັບການເກີດລູກ, ການຮັບເດັກມາລ້ຽງ, ຫຼືການຮັບເອົາເດັກມາດູແລໃຫ້ພາກຣັຖ, ຫຼືຍ້ອນສາເຫດສຸກເສີນທີ່ເກີດຈາກສະມາຊິກຄອບຄົວມີສະຖານະດ້ານທະຫານ, ຫຼືໄດ້ຮັບແຈ້ງວ່າມີການເອີ້ນຕົວໃຫ້ກຽມອອກຮັບໜ້າທີ່ທາງດ້ານທະຫານ
- ຜູ້ໄດ້ຮັບຜົນປະໂຫຍດອາດມີສິດໄດ້ຮັບເງິນຈາກການຂໍລາພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ ສູງຮອດ 26 ອາທິດຕໍ່ປີ ເພື່ອການເບິ່ງແຍງສະມາຊິກຄອບຄົວຜູ້ປ່ວຍໜັກ

### ເລີ່ມວັນທີ 1ເດືອນກໍລະກົດ ປີ 2021:

- ຜູ້ໄດ້ຮັບຜົນປະໂຫຍດອາດມີສິດໄດ້ຮັບເງິນຈາກການຂໍລາພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ ສູງຮອດ 12 ອາທິດ ເພື່ອການເບິ່ງແຍງສະມາຊິກຄອບຄົວຜູ້ປ່ວຍໜັກ

**ຜູ້ໄດ້ຮັບຜົນປະໂຫຍດມີສິດຮັບເງິນຮ່ວມທັງໝົດບໍ່ເກີນ 26 ອາທິດໃນແຕ່ລະປີ ຈາກການຂໍລາພັກງານດ້ວຍສາເຫດຄອບຄົວ ແລະຄວາມເຈັບປ່ວຍ**

## ຜູ້ໃດມີສິດໄດ້ຮັບຜົນປະໂຫຍດຕາມກົດໝາຍ

ຕາມທຳມະດາ ພະນັກງານມີສິດເປັນຜູ້ໄດ້ຮັບຜົນປະໂຫຍດຮັບເງິນຈາກການຂໍລາພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ ຖ້າວ່າ:

- ບຸກຄົນທີ່ຖືກຈ່າຍໂດຍນາຍຈ້າງໃນ Massachusetts ຫຼື
- ບຸກຄົນນັ້ນອາໄສຢູ່ໃນ Massachusetts ແລະໄດ້ຮັບຄ່າຈ້າງຂອງຜູ້ເສຍພາສີທີ່ຕ້ອງໄດ້ແຈ້ງໃຫ້ IRS ໂດຍແບບຟອມ 1099-MISC ເຊິ່ງມີຫຼາຍກວ່າ 50% ຂອງຈຳນວນພະນັກງານຫຼື
- ຜູ້ມີຖານະເປັນນາຍຈ້າງຕົວເອງ ທີ່ອາໄສຢູ່ຣັຖແມສຊາຈູແຊັດ ແລະເລືອກທີ່ຈະມີສ່ວນຮ່ວມໃນໂປຣແກຣມ

## ການຮັກສາວຽກງານ

ຕາມທຳມະດາ ລູກຈ້າງທີ່ໄດ້ຮັບເງິນຈາກການຂໍລາພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ ຈະຕ້ອງໄດ້ຕຳແໜ່ງເກົ່າ ຫຼືທຽບເທົ່າຕຳແໜ່ງເກົ່າ ພ້ອມທັງຕ້ອງໄດ້ສະຖານະເກົ່າ, ຄ່າຈ້າງ, ຜົນປະໂຫຍດ, ການນັບໄລຍະເວລາທີ່ທຳງານມາ, ແລະລະດັບໄວຍະວຸດນັບມາຈົນຮອດວັນລາພັກງານ

*ການຮັກສາວຽກງານເຫຼົ່ານີ້ບໍ່ນຳໃຊ້ຕໍ່ຜູ້ຮັບເໝົາ*

## ລາຍໄດ້ຕໍ່ອາທິດ

ເພື່ອເປັນທຶນໃຫ້ໂປຣແກຣມ PFML ນາຍຈ້າງຈະຕ້ອງຕັດເງິນບັນນາການອອກຈາກລາຍໄດ້ຂອງຜູ້ໄດ້ຮັບຜົນປະໂຫຍດ ຫຼືຈາກລາຍໄດ້ອື່ນໆ ເລີ່ມວັນທີ 1 ເດືອນຕຸລາ ປີ 2019. ຜູ້ໄດ້ຮັບຜົນປະໂຫຍດສາມາດຍື່ນຂໍເງິນລາພັກງານໄດ້ ເລີ່ມເດືອນມັງກອນ ປີ 2021 ຜ່ານກົມການຂໍລາພັກງານດ້ວຍບັນຫາຄອບຄົວແລະຄວາມເຈັບປ່ວຍ. ຄ່າຈ້າງສະເລ່ຍຕໍ່ອາທິດຂອງຜູ້ໄດ້ຮັບຜົນປະໂຫຍດຈະຖືກນຳມາໃຊ້ໄລ່ປະເມີນເງິນລາຍໄດ້ຂອງການລາພັກງານ ສຳຫຼັບລາຍໄດ້ທີ່ອາດສູງເຖິງ $850 ຕໍ່ອາ

## ຫ້າມມີການແກ້ແຄ້ນ ຫຼືຈຳແນກ

- ມັນເປັນສິ່ງຜິດກົດໝາຍຖ້ານາຍຈ້າງມີການຈຳແນກ ຫຼືແກ້ແຄ້ນຕໍ່ລູກຈ້າງທີ່ໃຊ້ສິດທີ່ທີ່ເຂົາເຈົ້າໄດ້ຮັບການຄຸ້ມຄອງຈາກກົດໝາຍ.
- ຖ້າມີການຈຳແນກ ຫຼືແກ້ແຄ້ນ ຍ້ອນສາເຫດຈາກການໃຊ້ສິດທິຕາມກົດໝາຍທີ່ເກີດຂຶ້ນບໍ່ກາຍ 3 ປີນັບຈາກວັນທີ່ຖືກລະເມີດ, ລູກຈ້າງ ຫຼືຜູ້ເຄີຍເປັນລູກຈ້າງ ມີສິດຍື່ນຟ້ອງຄະດີຄວາມໃນສານແພ່ງ ແລະອາດມີສິດໄດ້ຮັບເງິນຄ່າເສຍຫາຍເຖິງ 3 ເທົ່າຕົວຂອງເງິນຄ່າຈ້າງທີ່ສູນເສຍໄປ

## ໂຄງການພາກເອກະຊົນ

ຖ້າວ່ານາຍຈ້າງສະເໜີເງິນລາພັກງານດ້ວຍສາເຫດຄອບຄົວ ຄວາມເຈັບປ່ວຍ ຫຼືທັງສອງຢ່າງ ເປັນຈຳນວນເທົ່າກັນກັບທີ່ກົດໝາຍໄດ້ກຳນົດໄວ້ໃຫ້ແລ້ວ ທາງນາຍຈ້າງມີສິດຍື່ນຂໍຍົກເວັ້ນບໍ່ອອກເງິນ. ເຖິງແມ່ນວ່າ ນາຍຈ້າງເລືອກທີ່ຈະອອກເງິນຈ່າຍຄ່າລາພັກງານຜ່ານໂຄງການພາກເອກະຊົນ ຝ່າຍລູກຈ້າງຍັງຈະໄດ້ຮັບການຄຸ້ມຄອງທາງກົດໝາຍ ເພື່ອບໍ່ໃຫ້ມີການຈຳແນກ ຫຼືແກ້ແຄ້ນເກີດຂຶ້

**ຖ້າທ່ານມີຄຳຖາມ ຫຼືຂໍ້ສົງໄສກ່ຽວກັບໂຄງການລາຂໍພັກງານດ້ວຍສາເຫດຄອບຄົວແລະຄວາມເຈັບປ່ວຍ**
**ກະລຸນາຕິດຕໍ່ທີ່ MassPFML@Mass.gov ຫຼືເຂົ້າໄປໃນ mass.gov/DFML**

ໃບແຈ້ງນີ້ຈະຕ້ອງຖືກຕິດໄວ້ໃນບໍລິເວນທີ່ທຳງານທີ່ເຫັນໄດ້ງ່າຍ